ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົວທາງ

ເລກທີ: 13376 /ກຂທ

ນະຄອນຫຼວງວຽງຈັນ, ວັນທີ: 02 ມິຖຸນາ 2023

## ຫນັງສືແຈ້ງເຊີນປະມູນ

1. ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ມີຄວາມທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມ ເຂົ້າຮ່ວມປະມູນ ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ແຕ່ເມືອງປາກທາ ຫາ ເມືອງຜາອຸດົມ, ແຂວງບໍ່ແກ້ວ, ຄວາມຍາວ 30.25 ກິໂລແມັດ. ມີໄລຍະເວລາກໍ່ສ້າງ 36 ເດືອນ.
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ, ຮູບແບບ ຂັ້ນຕອນດຽວ ຊອງດຽວ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດ ກໍ່ສ້າງ ແລະ ສ້ອມແປງຂົວທາງ (ປະຕັງຊັ້ນ 1) ທີ່ຖືກຕ້ອງຕາມກົດຫມາຍ ເຂົ້າຮ່ວມ.
4. ແຫຼ່ງທຶນຊໍາລະ ແມ່ນງົບປະມານລົງທຶນຂອງລັດຖະບານ 100%, ຈັດສັນຢູ່ໃນແຜນການລົງທຶນຂອງລັດ ຂອງກະຊວງ ຍທຂ (ທຶນໂຄງການເປົ້າໝາຍສະເພາະ) ຕັ້ງແຕ່ປີ 2023 ເປັນຕົ້ນໄປ.
5. ບໍລິສັດທີ່ສົນໃຈສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ທີ່ ພະແນກແຜນການ ແລະ ງົບປະມານ, ກົມຂົວທາງ ເບີໂທລະສັບຕິດຕໍ່: 021 412291 ໂທລະສານ: 021 413249 ໃນໂມງລັດຖະການ, ໃນລາຄາ 3,000,000 ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ.
6. ການຢ້ຽມຢາມສະໜາມ ຈະໄດ້ຈັດຂຶ້ນໃນວັນທີ 16 ມິຖຸນາ 2023 ແລະ ກອງປະຊຸມກ່ອນການປະມູນຈະໄດ້ຈັດຂຶ້ນໃນເວລາ 13:30 ໂມງ ຂອງວັນດຽວກັນ.
7. ຊອງປະມູນຈະຕ້ອງສົ່ງໂດຍກົງໃຫ້ຄະນະກໍາມະການປະມູນ ກ່ອນເວລາ 14:00 ໂມງ, ວັນທີ 20 ມິຖຸນາ 2023, ທີ່ຫ້ອງປະຊຸມກົມຂົວທາງ (ເບີ 3) ຊັ້ນ 2, ອາຄານ 2 ຊັ້ນ ຕໍ່ໜ້າປະຕູທາງເຂົ້າ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:30 ໂມງ, ວັນທີ 20 ມິຖຸນາ 2023 ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມປະມູນ.
9. ທຸກຊອງປະມູນຕ້ອງໄດ້ປະກອບ ຫນັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານມູນຄ່າຢ່າງຫນ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີປະມູນ.

**ຫົວໜ້າກົມຂົວທາງ**

ກົມຂົວທາງ

ລັດຕາ ຂັດທິຍະ